**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 22 ມີນາ 2009 (03-22-2009)**

---

## ການແກ້ໄຂບັນຫາ:

**ຂໍ້ພຣະຄັມພີໃນບົດຮຽນ:** (ເນເຫມີຢາ 5:1-16)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ບົດຮຽນນີ້ເວົ້າກ່ຽວກັບຄວາມຍຸຕິທັໃພາຍໃນ.ຊຶ່ງສະແດງໃຫ້ເຫັນດ້ວຍຂໍ້ຂັດແຍ້ງ ຂອງຝ່າຍກົງກັນຂ້າມ ແລະການຮຽກຮ້ອງຕ້ອງການຂອງວຽກງານ, ການຊູ່ເຂັ້ນໃນການຕົກລົງຮັບພາຣະກິດ, ການລົງມືກໍ່ສ້າງກໍາແພງ. ເນເຫມີຢາໄດ້ຮຽນຮຮູ້ວ່າຜົນສໍາເຣັດໃນການລຸກຂຶ້ນເພື່ອການຮັບໃຊ້ພຣະເຈົ້ານັ້ນ ລາວຕ້ອງມີຄວາມ ຍຸຕິທັມ ແລະຊຸກຍູ້ໃຫ້ທຸກຄົນເຮັດເໝືອນກັນ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ?:** ເນື່ອງຈາກວ່າມີຫລາຍຄົນມີຄວາມກັງວົນ ກ່ຽວກັບຄວາມຫວຸ້ນວາຍ ທີ່ເກີດຂຶ້ນຢູ່ພາຍນອກ, ເວລາໃດເມື່ອມັນເກີດຂຶ້ນຢູ່ພາຍໃນ ມັນກໍເປັນອັນຕະລາຍຫລາຍຕໍ່ທ່ານ. ສາມີພັລຍາເກີດ ຄວາມບໍ່ເຂົ້າໃຈກັນ ກໍເກີດມີຄວາມຢ່າຮ້າງ. ກຸ່ມຄົນພາຍໃນໂບດບໍ່ເຫັນດີໃນການນໍາພາຂອງຜູ້ນໍາຂອງໂບດ ກໍເກີດມີ ການແບ່ງກຸ່ມ. ທ່ານມີວິທີທາງແກ້ໄຂແນວໃດຕໍ່ເຫດການອັນລໍາບາກໃຈນີ້ແນວໃດ?

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**
ຄືທ່ານຈະຕ້ອງໃຫ້ຄວາມຍຸຕິທັມກັບທຸກຄົນເປັນອັນດັບນຶ່ງ ເພື່ອການຫັນໜ້າເຂົ້າຮັບໃຊ້ພຣະເຈົ້າ. ການຫັນໜ້າເຂົ້າ ຮັບໃຊ້ພຣະເຈົ້າບໍ່ແມ່ນເປັນການໃຫ້ທ່ານປັກປໍ້າຄົນອື່ນ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**
1. ອະທິຖານຂໍການຊົງນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນໍາ:** ບົດຮຽນອາທິດນີ້ຈະສືບຕໍ່ເຣື່ອງການບັນລະຍາຍຂອງເນເຫມີຢາທີ່ເປັນຂັ້ນຕອນໃນການຮັບໃຊ້ພຣະ ເຈົ້າຂອງລາວ.

- ເນເຫມີຢາໄດ້ສະແດງເຖິງນີ້ທີ່ເພິ່ນບໍ່ໄດ້ຄວາມຍຸຕິທັມໃນການກໍ່ສ້າງກໍາແພງຂຶ້ນໃໝ່, ເນເຫມີຢາໄດ້ຕໍ່ ສູ້ແກ້ໄຂກັບບັນຫານີ້ຢ່າງຮີບດ່ວນ, ພວກເຮົາຮັບໃຊ້ພຣະເຈົ້າບາງເທື່ອພວກເຮົາກໍຖືກເອັ້ນມາໃສ່ຢ່າງ ບໍ່ມີຄວາມຍຸຕິທັມຈາກຄົນພາຍນອກດ້ວຍເຊັ່ນກັນ.

1. **ຮັບຟັງຄວາມເສົ້າໂສກໃຈ**: (ເນເຫມີຢາ 5:1-5)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເນເຫມີຢາ 5:1-5
- ຄຳຖາມ: ທ່ານໄດ້ເຫັນຄວາມສັບສົນອົນລະວົນຂອງກຸ່ມຄົນພາຍໃນກັບກຸ່ມຄົນພາຍນອກມີຄວາມຄັດຄ້ານຖົກຖຽງກັນໂດຍອີກຝ່າຍນຶ່ງເປັນຜູ້ຮັບໃຊ້ພຣະເຈົ້າແລ້ວທ່ານມີຄວາມລຳຄານແນວໃດ?
- ໃນຖານະພວກເຮົາເປັນຜູ້ຮັບໃຊ້ພຣະເຈົ້າ, ເຊື່ອໃນພຣະເຈົ້າພວກເຮົາຈະປົກປ້ອງການຕໍ່ສູ້ຢ່າງນີ້ໃຫ້ເຂົາເຈົ້າໂນ້ມອຽງມາເປັນມີໃຈຈົດຈໍ່ໃນການກໍ່ສ້າງສິ່ງທີ່ເພພັງໄປແລ້ວໃຫ້ເປັນການປົວແປງຄວາມເຈັບຊໍ້າ ແລະ ຄວາມໝົດຫວັງທີ່ເກີດຂຶ້ນໃນລອບຂ້າງຂອງພວກເຮົາໄດ້ແນວໃດ?
- ໜູນໃຈນັກຮຽນໃຫ້ສະແດງອອກໃຫ້ເຫັນເຣື່ອງຄວາມໝົດຫວັງທັງສາມກຸ່ມຂອງຄົນຜູ້ທີ່ຮ້ອງໄຫ້ອອກມາທີ່ສະ
- ແດງເຖິງສິ່ງທີ່ເຂົາເຈົ້າຕ້ອງການ ແລະໃຫ້ບັນລະຍາຍສັ້ນໆ ວ່າແມ່ນການຮ້ອງໄຫ້ສຳລັບເຣື່ອງໃດທີ່ເປັນການຮ້ອງໄຫ້ທີ່ດີ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ**: (ເນເຫມີຢາ 5:1-5)

1. ໃນຄວາມຕ້ອງການຂອງຄົນສາມກຸ່ມທີ່ຮ້ອງໄຫ້ອອກມານັ້ນມີຫຍັງແດ່?
2. ທ່ານຈະຄິດຢ່າງໃດທີ່ມີຄົນໂອຍວາຍຢ່າງຫລວງຫລາຍແນວນີ້?
3. ໃນເມື່ອມີຄົນໄດ້ຮັບບັນຫາຢ່າງນີ້ແລ້ວບໍ່ໄດ້ຮຽນຈາກການຮຽນຂອງເນເຫມີຢາໃນເຣື່ອງນິສັຍໃຈຄໍຂອງລາວໃນສມັຍກ່ອນນັ້ນທ່ານຄິດວ່າຄົນນັ້ນຈະເປັນຢ່າງໃດ?

2. **ປະເຊີນໜ້າກັບສິ່ງທີ່ບໍ່ຖືກຕອ້ງ**: (ເນເຫມີຢາ 5:6-9)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເນເຫມີຢາ 5:6-9
- ນຳພານັກຮຽນທົດສອບເບິ່ງການຕອບສນອງທີ່ກໍ່ໃຫ້ເກີດຜົນສືບຕໍ່ໆກັນມາຂອງເນເຫມີຢາ ຫລັງຈາກເພິ່ນໄດ້ຍິນເຣື່ອງຜິດໆ ຖືກໆ: ເພິ່ນທຳດ້ວຍອາລົມ, ເພິ່ນຕຶກຕອງຄຳນຶງເຖິງບັນຫານັ້ນ ແລະແລ້ວເພິ່ນກໍທຳດ້ວຍຄວາມແນ່ໃຈຢ່າງຖືກຕ້ອງ. ເປັນເພາະເຫດໃດຈຶ່ງວ່າການຕອບສນອງຢ່າງນີ້ແຕ່ລະຢ່າງຈຶ່ງມີຄວາມສຳຄັນຕໍ່ເຫດການດັ່ງກ່າວນັ້ນ?
- ຂຽນ " ບໍ່ແມ່ນທຸກຂໍ້ຂັດແຍ້ງເປັນເຫດໃຫ້ຫຍຸ້ງຍາກ ຄວາມຜິດພາດທີ່ເປັນສິ່ງທີ່ປະເຊີນໜ້າໃສ່ກະດານ.
- ໃຫ້ຖາມນັກຮຽນວ່າ ໃນອາທິດນີ້ທ່ານໄດ້ປະເຊີນກັບການຂັບຣົດໄປທາງທີ່ມີຣົດຕິດຫລາຍ, ໄປທະນາຄານທີ່ມີຄົນຫລາຍແງະໄດ້ລຽນແຖວ (ຄິວ) ຍາວບໍ່? ໃນຂນະທີ່ທ່ານເຈີບັນຫາແບບນີ້ທ່ານມີຄວາມຮູ້ສຶກແນວໃດ?
- ທ່ານມີທາງອອກໃນຂນະທີ່ທ່ານຕິດຢູ່ໃນສະພາວະແນວນີ້ດ້ວຍວິທີໃດ? (ອົດທົນ….)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ**: ເນເຫມີຢາ 5:6-9

1. ເນເຫມີຢາໄດ້ຕອບສນອງຕໍ່ບັນຫາຂອງຄົນທີ່ສິ້ນຫວັງນີ້ໄດ້ຢ່າງໃດ?
2. ທ່ານເດທ່ານຈະຕອບສນອງແນວໃດ?
3. ທ່ານເຊື່ອວ່າການຕອບສນອງເຫດການຂອງເນເຫມີຢາ (ດ້ວຍອາລົມທີ່ໄຕ່ຕອງກັບບັນຫາ ແລະການກະທຳໄດ້ຜົນດີຫລືບໍ່?
4. ທ່ານໄດຮຽນຈາກປະສົບການນັ້ນແນວໃດ?

3 . **ເປັນຕົວຢ່າງທີ່ດີ:** (ເນເຫມີຢາ 5:10-16)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເນເຫມີຢາ 5:10-16
- ເນເຫມີຢາໄດ້ຍອມເຂົ້າຮ່ວມໃນການໃຫ້ຄົນຢືວຢືມເງິນຂອງປະຊາຊົນຂອງລາວເປັນການລົງທຶນ.
- ໃຫ້ນັກຮຽນສະແດງເຖິງເນເຫມີຢາກ້າໃຫ້ຮັບຄຳເຫລົ່ານີ້ ແລະຍອມຮັບການປ່ຽນແປງຂອງລາວເອງ
- ແບ່ງປັນຕົວຢ່າງທີ່ດີຂອງບາງຄົນທີ່ໃຫ້ຄົນອື່ນຢືມເງິນທີ່ທ່ານຮູ້ຈັກ ໂດຍເປັນຕົວຢ່າງ ແລະເປັນຫຍັງຈຶ່ງວ່າມີຊີວິດທີ່ເປັນຕົວຢ່າງນັ້ນດີກວ່າຄຳເວົ້າລ້າໆ.
- ໃຫ້ນັກຮຽນນຶກຄິດຢ່າງງຽບໆວ່າ ແມ່ນຫຍັງທີ່ເຂົາເຈົ້າຈະຕ້ອງປ່ຽນໃນຊີວິດຂອງເຂົາເຈົ້າທີ່ເຂົາເຈົ້າກຳລັງຊອກສແວງຫາການເປັນຜູ້ນຳທີ່ດີສຳລັບຄົນອື່ນ.
- ແມ່ນບົດຮຽນອັນໃດທີ່ທ່ານສາມາດຮຽນເຣື່ອງການແກ້ປັນຫາຄວາມຂັດແຍ້ງຈາກຊີວິດຂອງເນເຫມີຢາທັງໝົດນີ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ເນເຫມີຢາ 5:10-16

1. ແມ່ນອັນໃດທີ່ເນເຫມີຢາໄດ້ກະທຳໃນການທີ່ກ້າຍອມຮັບຜິດ?
2. ແມ່ນຫຍັງທີ່ເປັນຄວາມສຳຄັນສຳລັບການຍອມຮັບຜິດ?
3. ແມ່ນຫຍັງທີ່ເປັນການປະເມີນຂອງເນເຫມີຢາທີ່ປົວແປງແກ້ໄຂໃຫ້ຄົນອື່ນທີ່ເພິ່ນໄດ້ເບິ່ງຄືນຫລັງໃນຊີວິດຂອງເພິ່ນ.
4. ໃນຕາຊັ່ງ 1 ເຖິງ 10 ໃນການເປັນແບບຢ່າງຄຣິສຕຽນຂອງທ່ານໃຫ້ກັບຄົນອື່ນແຕ່ລະວັນນັ້ນຢູ່ໃນລະດັບໃດ?
5. ແມ່ນຫຍັງແດ່ທີ່ທ່ານຈະຕ້ອງໄດ້ປ່ຽນແປງຕື່ມທີ່ພຣະເຈົ້າຕ້ອງການໃນການເປັນຜູ້ນຳຂອງທ່ານ?

**ພຣະຄັມພີແຫ່ງຄວາມຈິງ**

- ພວກເຮົາຕ້ອງຟັງຊຶ່ງກັນ ແລະກັນຢ່າງລະມັດລະວັງ ຖ້ອນຖີ່ ຖ້າພວກເຮົາຈິງໃຈຢາກຈະເຂົ້າໃຈເຖິງບັນຫາຂອງຄົນອື່ນ.
- ພວກເຮົາຄວນຫາທາງອອກໃຫ້ກັບຜູ້ທີ່ປະເຊີນກັບການກະທຳຜິດ.
- ພວກເຮົາຄວນຈະເປັນຜູ້ທີ່ຍອມເສັຽສຣະຢ່າງແທ້ຈິງເພື່ອຮັກສາກຽດຕິຍົດຂອງພຣະເຈົ້າ.
- ພວກເຮົາຄວນເປັນຕົວຢ່າງທີ່ດີໃຫ້ຊຶ່ງກັນແລະກັນທັງສິ່ງທີ່ພວກເຮົາເວົ້າ ແລະສິ່ງທີ່ພວກເຮົາເຮັດດ້ວຍ.
- ໃນເມື່ອພວກເຮົາພົບກັບການເລືອກທີ່ດີແລ້ວ, ມີຄຳຖາມຢູ່ວ່າ ແມ່ນອັນໃດທີ່ເປັນສິ່ງທີ່ດີສຳລັບພຣະເຈົ້າ?
- ການມີຄຳຖາມກ່ອນນັ້ນ ສຳຄັນກວ່າ ເຊັ່ນ: ມີຫຍັງແດ່ທີ່ກົດບັນຍັດອະນຸຍາດໃຫ້ຂ້າພະເຈົ້າເຮັດໄດ້?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**